ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 29 ພຶດສະພາ ຫາ 02 ມິຖຸນາ 2023



ແຂວງເຊກອງ ຈະສູ້ຊົນຜະລິດເຂົ້າໃຫ້ໄດ້ 49.114 ໂຕນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ແຂວງເຊກອງ ຈະສູ້ຊົນຜະລິດເຂົ້າໃຫ້ໄດ້ 49.114 ໂຕນ

**ຂ່າວ-ພາບ: ສົມຍາ**

ຂປລ. ແຫລ່ງຂ່າວຈາກ ແຂວງເຊກອງ ໃຫ້ຮູ້ວ່າ: ໃນປີ 2023 ແຂວງເຊກອງ ຈະສູ້ຊົນຜະລິດເຂົ້າເປືອກລວມ ໃຫ້ໄດ້ 49.114 ໂຕນ ໃນເນື້ອທີ່ 12.189 ເຮັກຕາ ໃນນີ້, ຜະລິດເຂົ້ານາແຊງໃຫ້ໄດ້ 3.437 ໂຕນ ໃນເນື້ອທີ່ 825 ເຮັກຕາ ແລະ ຜະລິດເຂົ້ານາປີ 42.956 ໂຕນ ໃນເນື້ອທີ່ 9.929 ເຮັກຕາ, ສະເລ່ຍເຂົ້າກິນໃຫ້ໄດ້ 351 ກິໂລເຂົ້າເປືອກຕໍ່ຄົນຕໍ່ປີ.

ທ່ານ ເສີມສີ ສຸລິຕະ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງເຊກອງ ໄດ້ລາຍງານເມື່ອບໍ່ດົນນີ້ວ່າ: ໃນປີ 2022 ຜ່ານມາ, ແຂວງ ເຊກອງ ສາມາດຜະລິດເຂົ້າໄດ້ທັງໝົດ 41.591 ໂຕນ ໃນເນື້ອທີ່ 11.143 ເຮັກຕາ ທຽບໃສ່ແຜນປີເທົ່າກັບ 99,41%, ສະເລ່ຍເຂົ້າກິນໄດ້ 288 ກິໂລຕໍ່ຄົນຕໍ່ປີ ເມື່ອທຽບໃສ່ມາດຖານການບໍລິໂພກເຂົ້າ (234 ກິໂລຕໍ່ຄົນຕໍ່ປີ) ເຫັນວ່າ ມີເຂົ້າເຫລືອກິນ 10.087 ໂຕນ. ສຳລັບການຜະລິດສະບຽງອາຫານ ເພື່ອບໍລິໂພກພາຍໃນ ແລະ ປ້ອນໂຮງງານປຸງແຕ່ງອຸດສາຫະກຳ ປະຕິບັດໄດ້ 5.373 ເຮັກຕາ, ຜົນຜະລິດ 41.011 ໂຕນ ທຽບໃສ່ແຜນເທົ່າກັບ 83% ໃນນີ້, ຜັກກິນໃບປະຕິບັດໄດ້ 1.254 ເຮັກຕາ ຜົນຜະລິດ 8.032 ໂຕນ, ຜັກກິນໝາກ 1.619 ເຮັກຕາ ຜົນຜະລິດ 11.532 ໂຕນ, ຜັກກິນຫົວ 728 ເຮັກຕາ ຜົນຜະລິດ 9.307 ໂຕນ ແລະ ໄມ້ກິນໝາກປະຕິບັດໄດ້ 1.771 ເຮັກຕາ ຜົນຜະລິດ 12.139 ໂຕນ.



ສ່ວນການປູກພືດເປັນສິນຄ້າ ເປັນຕົ້ນ ມັນຕົ້ນທາດແປ້ງ 13.048 ເຮັກຕາ ຜົນຜະລິດ 275.092 ໂຕນ, ກາເຟ 10.182 ເຮັກຕາ, ເນື້ອທີ່ໃຫ້ໝາກ 8.064 ເຮັກຕາ ຜົນຜະລິດ 33.093 ໂຕນ, ກ້ວຍ 601 ເຮັກຕາ ຜົນຜະລິດ 10.263 ໂຕນ, ສາລີຫວານ 43 ເຮັກຕາ ຜົນຜະລິດ 197 ໂຕນ, ໄມ້ກິນໝາກຕ່າງໆ 1.535 ເຮັກຕາ ຜົນຜະລິດ 13.969 ໂຕນ, ຜັກກາດຫົ່ 351 ເຮັກຕາ ຜົນຜະລິດ 12.618 ໂຕນ, ຜັກກະລໍ່າປີ 533 ເຮັກຕາ ຜົນຜະລິດ 36.747 ໂຕນ, ໂສມ 112 ເຮັກຕາ ຜົນຜະລິດ 245 ໂຕນ ແລະ ພືດສິນຄ້າອື່ນ 1.242 ເຮັກຕາ ຜົນຜະລິດ 6.096 ໂຕນ.

ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ໃຫ້ຮູ້ຕື່ມວ່າ: ປັດຈຸບັນ, ທົ່ວແຂວງມີຟາມລ້ຽງສັດທັງໝົດ 17 ຟາມ ໃນນີ້, ມີຟາມລ້ຽງງົວ 3 ຟາມ, ລ້ຽງໝູ 4 ຟາມ, ແບ້ 1 ຟາມ, ສັດປີກ 4 ຟາມ ແລະ ລ້ຽງປາ 5 ຟາມ.

ອັນພົ້ນເດັ່ນ ແມ່ນໄດ້ລິເລີ່ມໂຄງການລ້ຽງງົວນົມ ແບບເປັນຟາມແຫ່ງທຳອິດ ຢູ່ແຂວງເຊກອງ ຊຶ່ງປັດຈຸບັນແມ່ນຢູ່ໃນຂັ້ນຕອນການວາງແຜນນຳເຂົ້າກົນຈັກ ແລະ ນຳເຂົ້າງົວ ຄາດວ່າ ຈະຜະລິດນົມໄດ້ຈຳໜ່າຍໃນປີ 2025. ທັງໝົດເຫລົ່ານີ້ ຈະປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທຳ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນພາຍໃນແຂວງ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;